KfW ENTWICKLUNGSBANK

On behalf of
Federal Ministry for the Environment, Nature Conservation and Nuclear Safety
of the Federal Republic of Germany

WWF

| ປົດຂ່າວ | ຈັດພິມໄດ້ທັນທີ |
|---|---|

# ໂຄງການ CarBi ມີຄວາມພ້ອມໃນການຈັດຕັ້ງປະຕິບັດກິດຈະກຳໂຄງການຢ່າງເຕັມທີ່

**ທີ່ວຽງຈັນ, ທ້າຍເດືອນສິງຫານີ້:** ກອງທຶນອະນຸລັກທຳມະຊາດໂລກ ປະຈຳສປປ ລາວ (WWF-Laos) ໄດ້ ປະກອບລົດກະບະ ຈຳນວນເກົ້າຄັນ ແລະ ລົດຈັກ ຈຳນວນ13 ຄັນ ໃຫ້ແກ່ ໂຄງການ CarBi ເພື່ອ ນຳໃຊ້ເຂົ້າໃນວຽກງານອະນຸລັກປ່າ ສະຫງວນແຫ່ງຊາດ ເຊຊັບ. ປ່າສະຫງວນແຫ່ງຊາດ ເຊຊັບ ແມ່ນປ່າສະຫງວນທີ່ມີຄວາມ ອຸດົມສົມບູນແຫ່ງຫນຶ່ງ ແລະ ມີຂອບເຂດກວາມເອົາ 3 ເມືອງ ຂອງສອງແຂວງ ຄື ເຊກອງ ແລະ ສາລະວັນ.

ທ້າຍ ປີ 2011, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ WWF-Laos ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ເພື່ອຈັດຕັ້ງປະຕິບັດ ໂຄງການ CarBi. ໂຄງການ CarBi ເປັນໂຄງການໃຫຍ່ ທີ່ອົງການ WWF-Laos ໄດ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາ.

ໂຄງການນີ້ໄດ້ຮັບເງິນທຶນສະຫນັບສະຫນູນຈາກທະນາຄານພັດທະນາເຢັຍລະມັນ (KfW) ແລະ ມີຈຸດປະສົງທີ່ຈະຢຸດຕິການເສື່ອມໂຊມຂອງສະພາບປ່າໄມ້ ໂດຍການປົກປັກຮັກສາປ່າ ແລະ ສົ່ງເສີມການນຳໃຊ້ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ ພ້ອມທັງ ອະນຸລັກຄວາມຫລາກຫລາຍທາງດ້ານຊະນິດພັນ ທີ່ມີເອກະລັກສະເພາະ ບໍ່ໃຫ້ດັບສູນໄປຕາມການເວລາ.

ໂຄງການ CarBi ຖືກຈັດຕັ້ງປະຕິບັດຢູ່ປ່າສະຫງວນແຫ່ງຊາດ ເຊຊັບ ຢູ່ແຂວງສາລະວັນ ແລະ ເຊກອງ ນອກຈາກນີ້ ໂຄງການດັ່ງກ່າວຍັງຖືກຈັດຕັ້ງຢູ່ 4 ເຂດອະນຸລັກທຳມະຊາດ ໃນ ສສ ຫວຽດນາມ.

ທ່ານ ດຣ. ຄຳມອນ ຫລວງສັກດາ, ຫົວຫນ້າໂຄງການ CarBi, WWF-Laos, ໄດ້ໃຫ້ສຳພາດວ່າ “ບັນດາພາຫານະທີ່ໄດ້ຮັບມອບມານີ້ ຈະຊ່ວຍໃຫ້ພວກເຮົາສາມາດຈັດຕັ້ງປະຕິບັດວຽກງານໄດ້ວ່ອງໄວຂຶ້ນ ແລະ ສາມາດເຂົ້າເຖິງພື້ນທີ່ເປົ້າຫມາຍໄດ້ຢ່າງທົ່ວເຖິງ. ປ່າສະຫງວນແຫ່ງຊາດ ເຊຊັບ ມີເນື້ອທີ່ກວ້າງຂວາງ ແລະ ມີຄວາມຫຍຸ້ງຍາກ ໃນການເຂົ້າເຖິງ”.

ທ່ານ ແກ້ວໄພລິນ ໂງ່ນເພັດສີ, ຫົວຫນ້າໂຄງການ CarBi ປະຈຳແຂວງ ເຊກອງ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ໃຫ້ສຳພາດວ່າ “ການເຂົ້າຫາປະຊາຊົນທີ່ອາໄສຢູ່ໃກ້ພື້ນທີ່ ປ່າສະຫງວນແຫ່ງຊາດ ເຊຊັບ ໃນແຂວງເຊກອງ, ໂດຍສະເພາະເມືອງ ກະລຶມ ແມ່ນມີຄວາມຫຍຸ້ງຍາກຫລາຍ, ສ່ວນຫລາຍແລ້ວທີມງານຂອງພວກເຮົາຕ້ອງໄດ້ເຂົ້າໄປທາງເບື້ອງ ສສ ຫວຽດນາມ ແລ້ວຈຶ່ງໂຄ້ງກັບເຂົ້າມາເມືອງກະລຶມ. ສະນັ້ນ ການທີ່ໄດ້ຮັບພາຫະນະ ເພື່ອມາຮັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານໂຄງການນີ້ ຈະຊ່ວຍໃຫ້ການປະຕິບັດຫນ້າທີ່ຂອງພະນັກງານໂຄງການໃຫ້ມີຄວາມສະດວກ ແລະ ເຮັດໃຫ້ວຽກງານມີຄຸນນະພາບດີຂຶ້ນ.”

ບັນດາແຫລ່ງລາຍຮັບຫລັກ ຂອງປະຊາຊົນທີ່ອາໄສຢູ່ໃນ ແລະ ອ້ອມຂ້າງປ່າສະຫງວນແຫ່ງຊາດ ເຊຊັບ ແມ່ນການປູກເຂົ້າ, ລ້ຽງສັດ ແລະ ການຫາເຄື່ອງປ່າຂອງດົງ ໂດຍສະເພາະ ຊະນິດພັນທີ່ເປັນເສດຖະກິດ ເຊັ່ນ ເບ້ຍລາຍ, ເຫັດໄມ້ປ່ອງ ແລະ ຫມາກຈອງ, ເຊິ່ງບາງປີ ປະຊາຊົນສາມາດຂາຍຫມາກຈອງ ໄດ້ຫລາຍພັນ

ໂດລາສະຫະລັດ, ແລະ ມັນອາດເປັນການລົບກວນປ່າສະຫງວນ ຖ້າຫາກມີການເກັບກູ້ເຄື່ອງປ່າຂອງດົງຫລາຍເກີນໄປ.

ທ່ານ ພູລີທັດ ໄກຍະວົງສາ, ຫົວໜ້າໂຄງການ CarBi ປະຈຳແຂວງ ສາລະວັນ, ພ້ອມທັງເປັນ ຫົວໜ້າຂະແໜງຄຸ້ມຄອງ ຊັບພະຍາກອນປ່າໄມ້, ໄດ້ໃຫ້ສຳພາດວ່າ "ໃນປະຈຸບັນ, ການລັກລອບລ່າສັດປ່າແບບຜິດກົດໝາຍ ແລະ ເກັບກູ້ເຄື່ອງປ່າຂອງດົງຫລາຍໂພດ ໃນຂອບເຂດປ່າສະຫງວນຍັງປະກົດໃຫ້ເຫັນຢູ່. ເມື່ອໄດ້ຮັບການລາຍງານ ທາງທີມງານຈະໄປກວດກາບໍ່ທັນເຫດການຍ້ອນຂາດແຄນພາຫານະ. ສະນັ້ນ ຍານພາຫະນະດັ່ງກ່າວນີ້ຈະມີສ່ວນຊ່ວຍແກ້ໄຂຂໍ້ຫຍຸ້ງຍາກດັ່ງກ່າວ ແລະ ຊ່ວຍອຳນວຍຄວາມສະດວກ ໃຫ້ແກ່ວຽກງານປົກປັກຮັກສາຊັບພະຍາກອນທຳມະຊາດໃນປ່າສະຫງວນແຫ່ງຊາດ".

ຈຸດປະສົງ ແລະ ເປົ້າໝາຍຫລັກໃນການປະກອບລົດໃຫ້ໂຄງການ CarBi ກໍ່ເພື່ອໃຫ້ນຳໃຊ້ເຂົ້າໃນວຽກງານໂຄງການ, ອຳນວຍຄວາມສະດວກ, ປະຢັດເວລາໃນການເດີນທາງໄປເຮັດວຽກພາກສະໜາມ ແລະ ມີປະສິດທິພາບສູງ.

ທ່ານ ໄມກ້າ ອິງກອລສ໌, ຮອງຫົວໜ້າອົງການ ຝ່າຍອະນຸລັກ, WWF-Laos ໄດ້ໃຫ້ສຳພາດວ່າ "ຫລັງຈາກຈັດຕັ້ງປະຕິບັດໂຄງການ ບັນລຸຕາມເປົ້າໝາຍເປັນທີ່ຮຽບຮ້ອຍແລ້ວ ຍານພາຫານະດັ່ງກ່າວຈະຖືກມອບໂອນການຄຸ້ມຄອງ ແລະ ນຳໃຊ້ໃຫ້ແກ່ໜ່ວຍງານລັດ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການດຳເນີນວຽກງານປົກປັກຮັກສາຊັບພະຍາກອນທຳມະຊາດແບບຍືນຍົງໃນຂົງເຂດປ່າສະຫງວນແຫ່ງຊາດ ເຊຊັບ".

## Note for editor

**More about WWF's CarBi project:**
http://wwf.panda.org/what_we_do/where_we_work/greatermekong/our_solutions/projects/carbi/

**About WWF**
WWF has a long history of engagement in the region, the organization helped establish conservation programmes in Thailand in the early 1980's and has been active in Cambodia, Laos and Vietnam since 1990.

**WWF-GM:** www.panda.org/greatermekong
**WWF-Laos:** www.panda.org/laos
**WWF-Vietnam:** www.panda.org/vietnam

**More information, please contact:**

**In Laos**
**Noy Promsouvanh**
Communications Manager
WWF-Laos

PO.Box 7871
Vientiane, Lao PDR
T. +856 21 216080
Email: noy.promsouvanh@wwf.panda.org